**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດCOVID-19

ເລກທີ ..196.. / ຖວທ
ນະຄອນຫຼວງວຽງຈັນ,ວັນທີ 29 ພຶດສະພາ 2020

# ແຈ້ງການ

**ເຖິງ:** - **ຫ້ອງການ, ສະຖາບັນ, ໂຮງຮຽນ, ກອງວິຊາການ ແລະ ລັດວິສາຫະກິດ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**
- **ຫ້ອງການພະແນກຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງ, ແຂວງ ໃນຂອບເຂດທົ່ວປະເທດ**
- **ສະມາຄົມໂຮງແຮມ ແລະ ຮ້ານອາຫານ**
- **ສະມາຄົມທຸລະກິດທ່ອງທ່ຽວ**
- **ບັນດາຫົວໜ່ວຍທຸລະກິດທີ່ຢູ່ໃຕ້ການຄຸ້ມຄອງຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

**ເລື່ອງ: ການສືບຕໍ່ປະຕິບັດບັນດາມາດຕະການໃນການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ ວັນທີ 2-30 ມິຖຸນາ 2020**

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງເຊື້ອພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19, ເລກທີ 09/ນຍ, ລົງວັນທີ 3 ກຸມພາ 2020;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19, ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ວ່າດ້ວຍການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ ແລະ ມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ ວັນທີ 2 -30 ມິຖຸນາ 2020, ສະບັບເລກທີ 597/ຫສນຍ, ລົງວັນທີ 29 ພຶດສະພາ 2020.

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂໍຖືເປັນກຽດແຈ້ງການມາຍັງບັນດາທ່ານຊາບວ່າ: ການແຜ່ລະບາດຂອງພະຍາດ ໂຄວິດ-19 ໄດ້ສ້າງຜົນກະທົບຢ່າງໜັກໜ່ວງຕໍ່ເສດຖະກິດ ແລະ ສັງຄົມ ໃນທົ່ວໂລກ. ສຳລັບປະເທດພວກເຮົາ, ຜ່ານການຈັດຕັ້ງປະຕິບັດຄຳສັ່ງ, ຄຳແນະນຳ ຂອງລັດຖະບານ, ຂອງຄະນະສະເພາະກິດ ແລະ ຂອງບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ທີ່ອອກມາໃນແຕ່ລະໄລຍະ ພວກເຮົາ ສາມາດຄວບຄຸມການແຜ່ລະບາດໄວ້ໄດ້ ໂດຍບໍ່ມີຜູ້ຕິດເຊື້ອເພີ່ມ ແລະ ສາມາດປິ່ນປົວຜູ້ຕິດເຊື້ອດີແລ້ວ ຈຳນວນ 16 ຄົນ ໃນຈຳນວນຜູ້ຕິດເຊື້ອທັງໝົດ 19 ຄົນ ແລະ ສາມາດເຮັດໃຫ້ສັງຄົມ, ພາກທຸລະກິດ, ຜູ້ປະກອບການ, ໂຄງການ ແລະ

ໂຮງງານຕ່າງໆ ໄດ້ຄ່ອຍກັບມາໃຊ້ຊີວິດ ແລະ ເຄື່ອນໄຫວທຸລະກິດ ພາຍໃຕ້ເງື່ອນໄຂການດຳລົງຊີວິດປົກກະຕິແບບໃໝ່ (New Normal) ເທື່ອລະກ້າວ.

ເຖິງຢ່າງໃດກໍ່ຕາມ, ພວກເຮົາ ກໍ່ບໍ່ຄວນຖືເບົາ ແລະ ປະໝາດຢ່າງເດັດຂາດ ເນື່ອງຈາກໃນຕໍ່ໜ້າ ຍັງມີຄວາມສ່ຽງ ແລະ ສິ່ງທ້າທາຍ ທີ່ຈະເກີດມີການລະບາດອີກຮອບໃໝ່ ຍ້ອນສະພາບການລະບາດຢູ່ໃນພາກພື້ນ ແລະ ໂລກ ຍັງເພີ່ມຂຶ້ນຕໍ່ເນື່ອງ ແລະ ຍັງບໍ່ທັນສາມາດຢັບຢັ້ງການລະບາດ ຂອງພະຍາດດັ່ງກ່າວໄດ້ເທື່ອ. ສະນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ສືບຕໍ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດ ຂອງພະຍາດ ໂຄວິດ-19, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຈຶ່ງໄດ້ຜັນຂະຫຍາຍເພີ່ມເຕີມຂອງແຈ້ງການຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 597/ຫສນຍ, ລົງວັນທີ 29 ພຶດສະພາ 2020 ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານໃນຂົງເຂດຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ລວມທັງພາກທຸລະກິດທີ່ຢູ່ໃຕ້ການຄຸ້ມຄອງຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃນຕໍ່ໜ້າ ດັ່ງນີ້:

1. ໃຫ້ບັນດາສື່ມວນຊົນແຕ່ສູນກາງຮອດທ້ອງຖິ່ນ ສືບຕໍ່ໂຄສະນາເຜີຍແຜ່ ທັງທາງກວ້າງ ແລະ ທາງເລິກ ໃຫ້ສັງຄົມເຂົ້າໃຈ ຢ່າງເລິກເຊິ່ງ ແລະ ທົ່ວເຖິງ ກ່ຽວກັບຄວາມອັນຕະລາຍ ຂອງພະຍາດ ໂຄວິດ-19 ແລະ ມາດຕະການປ້ອງກັນ ໂດຍມີວິທີແນະນຳຢ່າງລະອຽດ ແລະ ເຂົ້າໃຈງ່າຍ ເພື່ອເຜີຍແຜ່ຜ່ານສື່ຕ່າງໆ. ພ້ອມກັນນັ້ນກໍ່ໃຫ້ສືບຕໍ່ເອົາໃຈໃສ່ວຽກງານໄດ້ຕອບ ແລະ ຕີຖອຍ ຂ່າວລວງ, ຂ່າວລື, ຂ່າວອະກຸສົນ ແລະ ຂ່າວປັ່ນປ່ວນ ;

2. ອະນຸຍາດໃຫ້ກົມ, ກອງວິຊາການ ແລະ ລັດວິສາຫະກິດ ທີ່ຂຶ້ນກັບກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ມາເຮັດວຽກເປັນປົກກະຕິ ແຕ່ຕ້ອງໃຫ້ຮັບປະກັນມາດຕະການປ້ອງກັນການຕິດເຊື້ອຕາມຄຳແນະນຳຂອງຄະນະສະເພາະກິດ ;

3. ອະນຸຍາດໃຫ້ໂຮງຮຽນສິລະປະຊົນທີ່ຍັງບໍ່ທັນໄດ້ເປີດຮຽນ ແລະ ປີສຸດທ້າຍຂອງສະຖາບັນວິຈິດສິນເປີດຮຽນໄດ້ໃນວັນທີ 2 ມິຖຸນາ, ສ່ວນຊັ້ນຮຽນອື່ນຂອງສະຖາບັນວິຈິດສິນແມ່ນໃຫ້ເປີດໃນວັນທີ 15 ມິຖຸນາ 2020 ;

4. ອະນຸຍາດໃຫ້ມີການຝຶກອົບຮົມ, ສຳມະນາ ແລະ ການປະຊຸມເປັນທາງການ ພາຍໃນປະເທດ, ແຕ່ບໍ່ອະນຸຍາດໃຫ້ຈັດງານລ້ຽງ ແລະ ໃຫ້ຮັກສາໄລຍະຫ່າງ 1 ແມັດຂຶ້ນໄປ, ມີບ່ອນລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື, ໃສ່ຜ້າອັດປາກ-ດັງ, ແທກອຸນຫະພູມ ແລະ ອະນາໄມສະຖານທີ່ ຕາມຄຳແນະນຳຂອງຄະນະສະເພາະກິດວາງອອກ. ສຳລັບການດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງພັກ ແມ່ນໃຫ້ປະຕິບັດຕາມຄຳສັ່ງແນະນຳເພີ່ມເຕີມ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 08/ຄລສພ, ລົງວັນທີ 11 ພຶດສະພາ 2020;

5. ອະນຸຍາດໃຫ້ສືບຕໍ່ເປີດ ສະຖານທີ່ທ່ອງທ່ຽວ,ໂຮງແຮມ, ຣີສອດ, ເຮືອນພັກ, ຮ້ານອາຫານ, ຮ້ານກາເຟ, ຮ້ານຕັດຜົມ, ຮ້ານເສີມສວຍ, ຮ້ານນວດ, ຮ້ານສະປາທຸກປະເພດ ແລະ ອະນຸຍາດເປີດໃໝ່ມີ ຮ້ານກິນ-ດື່ມ (ບໍ່ແມ່ນຮ້ານເຫຼົ້າ, ເບຍ ແລະ ສິ່ງມຶນເມົາ ເພື່ອຊຸມແຊວ) ທີ່ໄດ້ຮັບອະນຸຍາດຖືກຕ້ອງຕາມລະບຽບ ແລະ ໂຮງສາຍຮູບເງົາ ແຕ່ໃຫ້ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ເປັນຕົ້ນ ການຮັກສາໄລຍະຫ່າງ 1 ແມັດຂຶ້ນໄປ, ລ້າງມືດ້ວຍນ້ຳສະອາດ ໃສ່ສະບູ ຫຼື ເຈວລ້າງມື, ໃສ່ຜ້າອັດປາກ-ດັງ, ແທກອຸນຫະພູມ ແລະ ອະນາໄມສະຖານທີ່ ຕາມຄຳແນະນຳຂອງຄະນະສະເພາະກິດວາງອອກ;

6. ສືບຕໍ່ປິດບັນດາກິດຈະການ ຮ້ານບັນເທີງ, ຮ້ານຄາຣາໂອເກະ, ຮ້ານເກມ ແລະ ກາຊີໂນ;

7. ສືບຕໍ່ຫ້າມຈັດກິດຈະກຳຊຸມນຸມ ທີ່ບໍ່ເປັນທາງການ, ຊຸມແຊວ ແລະ ງານລ້ຽງສັງສັນ. ຫ້າມຈັດງານປະເພນີ ທີ່ບໍ່ສາມາດຮັກສາໄລຍະຫ່າງເກີນກວ່າ 1 ແມັດໄດ້ ແລະ ມີຄວາມສ່ຽງຕໍ່ການຕິດເຊື້ອ. ສຳລັບການແຕ່ງດອງ ໃຫ້ຖືເອົາການຈົດທະບຽນການແຕ່ງດອງນຳກັນແລ້ວ ກໍ່ແມ່ນມີຖານະເປັນຄູ່ຜົວ-ເມຍ ທີ່ຖືກຕ້ອງຕາມກົດໝາຍ,

ສ່ວນການຈັດງານແຕ່ງດອງນັ້ນ ໃຫ້ຈັດພິທີບາສີສູ່ຂວັນ ຕາມຮີດຄອງປະເພນີອັນດີງາມ ຂອງຊາດເຮົາ ບົນຈິດໃຈປະຢັດ ມັດທະຍັດ ໂດຍໃຫ້ຮັກສາໄລຍະຫ່າງ 1 ແມັດຂຶ້ນໄປ ແລະ ຕ້ອງຮັບປະກັນບໍ່ໃຫ້ມີຄວາມສ່ຽງໃນການຕິດເຊື້ອ;

8. ມອບໝາຍໃຫ້ຫົວໜ້າພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນະຄອນຫຼວງ, ແຂວງ ແລະ ບັນດາເມືອງ ໃນຂອບເຂດທົ່ວປະເທດ, ສະມາຄົມທຸລະກິດທ່ອງທ່ຽວ, ສະມາຄົມໂຮງແຮມ ແລະ ຮ້ານອາຫານ ແຕ່ງຕັ້ງຄະນະຮັບຜິດຊອບເຜີຍແຜ່ແນະນຳ, ຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາຢ່າງເຂັ້ມງວດ ;

9. ມາດຕະການທີ່ກຳນົດໄວ້ຂ້າງເທິງນີ້ ເລີ່ມມີຜົນສັກສິດ ນັບວັນທີ 2 - 30 ມີຖຸນາ 2020, ໃນພາກປະຕິບັດຕົວຈິງ ຈະໄດ້ມີການປະເມີນ, ທົບທວນ ແລະ ດັດປັບໃຫ້ເໝາະສົມຕື່ມ, ກໍລະນີມີການປ່ຽນແປງຈະແຈ້ງໃຫ້ຊາບເປັນແຕ່ລະໄລຍະ. ສ່ວນມາດຕະການດ້ານອື່ນໆທີ່ກ່ຽວຂ້ອງແມ່ນໃຫ້ປະຕິບັດຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະບັບເລກທີ 580 ລົງວັນທີ 15 ພຶດສະພາ 2020, ສະບັບເລກທີ 597/ຫສນຍ, ລົງວັນທີ 29 ພຶດສະພາ 2020 ແລະ ແຈ້ງການຕ່າງໆຂອງລັດຖະບານ, ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ ໂຄວິດ-19 ໃນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມແຈ້ງການນີ້ດ້ວຍ.

**ເຊັນແທນລັດຖະມົນຕີ**
**ຮອງລັດຖະມົນຕີ**
**ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ**
**ແລະ ແກ້ໄຂການລະບາດຂອງພະຍາດCOVID-19**

ລັດຖະມົນຕີ

ສະຫວັນຄອນ ຣາຊມຸນຕີ